ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 3009 /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2022

# ຂໍ້ຕົກລົງ

## ວ່າດ້ວຍການນຳໃຊ້ລະບົບເອເລັກໂຕຣນິກ NSWA⁺ ເຂົ້າໃນຄຸ້ມຄອງການແຈ້ງພາສີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍທຸລະກຳເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍລາຍເຊັນເອເລັກໂຕຣນິກ ສະບັບເລກທີ 59/ສພຊ, 12 ທັນວາ 2018;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

## ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງ:

**ມາດຕາ 1** ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ຕ້ອງສະເໜີຕໍ່ກົມພາສີ ເພື່ອລົງທະບຽນເປັນຜູ້ແຈ້ງພາສີ (ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ) ຈຶ່ງສາມາດນຳໃຊ້ລະບົບເອເລັກໂຕຣນິກເຂົ້າໃນການແຈ້ງພາສີ. ຜູ້ແຈ້ງພາສີ ຕ້ອງນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ທີ່ເຊື່ອມໂຍງເຂົ້າກັບລະບົບແຈ້ງພາສີເອກະເອເລັກໂຕຣນິກ (ASYCUDA) ຊຶ່ງເອີ້ນວ່າ ລະບົບ NSWA⁺ ເຂົ້າໃນການແຈ້ງພາສີໂດຍສັງເຂບ ແລະ ແຈ້ງພາສີເປັນລາຍອຽດ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຄຸ້ມຄອງການແຈ້ງພາສີ ແນໃສ່ຮັບປະກັນການຄວບຄຸມກວດກາຢ່າງຮັດກຸມ ແລະ ຈັດເກັບລາຍຮັບເຂົ້າງົບປະມານ ໄດ້ຢ່າງໂປ່ງໃສ, ຖືກຕ້ອງ ແລະ ຄົບຖ້ວນ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 2** ຮັບຮອງເອົາຂໍ້ມູນ ແລະ ເອກະສານ ແບບເອເລັກໂຕຣນິກ ທີ່ຜູ້ແຈ້ງພາສີປ້ອນເຂົ້າ ແລະ ລົງທະບຽນໃນລະບົບ NSWA⁺ ມີຄຸນຄ່າທາງກົດໝາຍທຽບເທົ່າກັບເອກະສານເປັນເຈ້ຍ ຕາມກົດໝາຍວ່າດ້ວຍດ້ວຍທຸລະກຳເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012.

**ມາດຕາ 3** ຮັບຮອງເອົາລາຍເຊັນເອເລັກໂຕຣນິກ ຂອງຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ທີ່ນຳໃຊ້ເຂົ້າໃນການຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ ແລະ ເອກະສານແຈ້ງພາສີ ແບບເອເລັກໂຕຣນິກ ຊຶ່ງລາຍເຊັນເອເລັກໂຕຣນິກ ທີ່ລົງທະບຽນຢ່າງຖືກຕ້ອງ ມີຄຸນຄ່າທາງກົດໝາຍທຽບເທົ່າລາຍເຊັນ ແລະ ຕາປະທັບ ຂອງຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ຕາມກົດໝາຍວ່າດ້ວຍລາຍເຊັນເອເລັກໂຕຣນິກ ສະບັບເລກທີ 59/ສພຊ, 12 ທັນວາ 2018.

**ມາດຕາ 4** ໃຫ້ຢຸດຕິການນຳໃຊ້ແບບພິມເອກະສານແຈ້ງພາສີທີ່ເປັນເຈ້ຍ ແລະ ຫັນໄປນຳໃຊ້ລະບົບເອເລັກໂຕຣນິກເຂົ້າໃນຂັ້ນຕອນການແຈ້ງພາສີທັງໝົດ.

**ມາດຕາ 5** ໃຫ້ຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ເກັບຮັກສາຂໍ້ມູນ ແລະ ເອກະສານແຈ້ງພາສີ ໃນຮູບແບບເອເລັກໂຕຣນິກ ເພື່ອເປັນຫຼັກຖານສຳລັບການກວດສອບຄືນ ຫຼື ການກວດກາ ຫຼັງການແຈ້ງພາສີຕາມລະບຽບການ.

**ມາດຕາ 6** ຜູ້ປະກອບການທີ່ພັດທະນາລະບົບເອເລັກໂຕຣນິກຮັບໃຊ້ການດຳເນີນທຸລະກິດຂອງຕົນເອງ ເຊັ່ນ: ລະບົບສັ່ງຊື້ເອເລັກໂຕຣນິກ, ລະບົບຕິດຕາມການຂົນສົ່ງເອເລັກໂຕຣນິກ ຫຼື ລະບົບອື່ນໆ ທີ່ມີຂໍ້ມູນຄືກັນກັບຂໍ້ມູນການແຈ້ງພາສີ ແມ່ນສາມາດສະເໜີຕໍ່ກົມພາສີ ເພື່ອເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນເອເລັກໂຕຣນິກໂດຍກົງ ແນໃສ່ຫຼຸດຜ່ອນຂັ້ນຕອນການປ້ອນຂໍ້ມູນທີ່ຊໍ້າຊ້ອນ.

**ມາດຕາ 7** ຜູ້ແຈ້ງພາສີ ທີ່ນຳໃຊ້ລະບົບ NSWA+ ເຂົ້າໃນການແຈ້ງພາສີ ຕ້ອງຊຳລະຄ່າບໍລິການນຳໃຊ້ລະບົບແຈ້ງພາສີປະຕູດຽວ ແລະ ຄ່າບໍລິການນຳໃຊ້ລະບົບ ASYCUDA ຕາມອັດຕາທີ່ໄດ້ກຳນົດໃນ ລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

**ມາດຕາ 8** ໃຫ້ທົດລອງນຳໃຊ້ລະບົບ NSWA$^{+}$ ເຂົ້າໃນການຄຸ້ມຄອງການແຈ້ງພາສີ ໄລຍະ ສາມ(3) ເດືອນ ຢູ່ດ່ານພາສີສາກົນສິນຄ້າທ່າບົກທ່ານາແລ້ງ. ຫຼັງຈາກນັ້ນ ໃຫ້ປະເມີນຜົນ ແລະ ລາຍງານຕໍ່ກະຊວງການເງິນ ເພື່ອພິຈາ ລະນາອະນຸມັດໃຫ້ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 9** ມອບໃຫ້ກົມພາສີ, ຜູ້ພັດທະນາລະບົບ NSWA$^{+}$ ແລະ ທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຊາບ ແລະ ພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 10** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ນັບແຕ່ວັນທີ 01 ຕຸລາ 2022 ເປັນຕົ້ນໄປ.

**ລັດຖະມົນຕີ**



ບຸນໂຈມ ອຸບົນປະເສີດ